*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, [Fast Track], 201-210*
https://doi.org/10.69692/SUJMRD12(Fast track)201

# Factors Influencing Changes in the Interior Architecture of Residential Houses in the Heritage Conservation Area of Luang Prabang Old Town

**Phatthaing Manithong[1*], Xayaphone Vongvilay[1], Khamxaiy Phanthavong[1]**
*Organization of Resources Management, Academic Management Office, Souphanouvong University, Lao PDR*

[1*]***Correspondence:*** *Phatthaing Manithong, Faculty of Architecture, Souphanouvong University, Tel: +856 20 23925607, E-mail: phatthaeingmanithong@gmail.com*
[1] *Faculty of Architecture, Souphanouvong University, Lao PDR*

**Article Info:**
**Submitted: May 25, 2026**
**Revised: May 27, 2026**
**Accepted: May 29, 2026**

## Abstract

The purpose of study were to 1) the level's opinion of the factors to changes in the interior architecture of residential houses in the Old Town Conservation Area (UA), and 2) the factors affecting architectural changes in residential buildings in the Old Town Conservation Area (UA). The study employed both quantitative and qualitative methods. The samples of this study were total of 135 individuals living in villages within the UA zone of Luang Prabang City, where the concentration of heritage-style residential houses is higher than in other areas. Data were analyzed using mean, standard deviation, multiple regression analysis. The research findings indicated that:

1) The level's opinions of the factors to changes in the interior architecture of residential houses in the Urban Conservation Area (UA) of Luang Prabang City found that all factors had an average value of medium, meaning that there is moderate agreement, but when considering each sub-factor, it can be seen that they are economic factors, environmental factors, social factors, and regulatory and legal factors.

2) The factors affecting architectural changes in residential buildings in the Urban Architectural Conservation Area (UA), Luang Prabang City found that the Sig. value was lower than the significance level of 0.05. This means that social factors and environmental factors significantly affected changes in the interior architecture of residential houses in the Urban Architectural Conservation Area (UA) in Luang Prabang City. When considering the independent variables that have the power to predict and explain changes in service quality that affect architectural changes in residential buildings in the Old Town Conservation Area (UA) in Luang Prabang, the percentage reached 27.20%.

**Keywords:** *Changing conditions, Residential interior architecture, Historic Urban Conservation Area.*

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

## 1. ພາກສະເໜີ

ນະຄອນຫຼວງພະບາງ ແມ່ນໜຶ່ງໃນຕົວເມືອງທີ່ໄດ້ຮັບການຂຶ້ນທະບຽນເປັນມໍລະດົກໂລກ ໂດຍອົງການຢູເນສໂກ (UNESCO) ໃນປີ 1995 ເນື່ອງຈາກມີເອກະລັກທີ່ໂດດເດັ່ນທາງດ້ານ ສະຖາປັດຕະຍະກຳແບບປະສົມປະສານ (Vernacular and Colonial Architecture) ລະຫວ່າງສິລະປະວັດທະນະທຳທ້ອງຖິ່ນ ແລະ ອິດທິພົນຈາກຍຸກອານານິຄົມ. ຄຸນຄ່າເຫຼົ່ານີ້ບໍ່ໄດ້ສະແດງອອກພຽງແຕ່ຮູບຊົງພາຍນອກຂອງອາຄານເທົ່ານັ້ນ, ແຕ່ຍັງລວມເຖິງ ອົງປະກອບທາງກາຍະພາບພາຍໃນ (Interior Physical Elements) ແລະ ການຈັດສັນພື້ນທີ່ໃຊ້ສອຍທີ່ສະທ້ອນເຖິງວິຖີຊີວິດ ແລະ ຮີດຄອງປະເພນີຂອງຊາວຫຼວງພະບາງມາຢ່າງຍາວນານ (UNESCO, 2004)

ເຖິງຢ່າງໃດກໍຕາມ, ໃນທົດສະວັດຜ່ານມາ, ດ້ວຍອິດທິພົນຂອງ ການຫັນເປັນຕົວເມືອງ (Urbanization) ແລະ ການຂະຫຍາຍຕົວຢ່າງຮຸນແຮງຂອງອຸດສາຫະກຳການທ່ອງທ່ຽວ, ໄດ້ສົ່ງຜົນກະທົບໂດຍກົງຕໍ່ສະພາບການນຳໃຊ້ສອຍອາຄານ. ເຮືອນທີ່ຢູ່ອາໄສຫຼາຍຫຼັງພາຍໃນເຂດອານຸລັກເມືອງເກົ່າ ໄດ້ມີການປັບປ່ຽນ ປະໂຫຍດໃຊ້ສອຍ (Functional Adaptation) ເພື່ອຕອບສະໜອງຕໍ່ກິດຈະກຳທາງເສດຖະກິດ ແລະ ຄວາມຕ້ອງການຄວາມສະດວກສະບາຍຕາມຍຸກສະໄໝ. ການປ່ຽນແປງເຫຼົ່ານີ້ ມັກຈະສົ່ງຜົນໃຫ້ເກີດການດັດແປງໂຄງສ້າງພາຍໃນ, ການນຳໃຊ້ວັດສະດຸສະໄໝໃໝ່ ແລະ ການຫຼຸດຜ່ອນຄວາມສຳຄັນຂອງພື້ນທີ່ວັດທະນະທຳດັ້ງເດີມ. ປັດໄຈສຳຄັນທີ່ມີອິດທິພົນຕໍ່ການປ່ຽນແປງ ປະກອບດ້ວຍ:ປັດໃຈດ້ານເສດຖະກິດ: ການຂະຫຍາຍຕົວຂອງອຸດສາຫະກຳການທ່ອງທ່ຽວ ເຮັດໃຫ້ມີການດັດແປງເຮືອນເປັນສະຖານທີ່ບໍລິການ (Guesthouse ແລະ Cafe). ປັດໃຈດ້ານສັງຄົມ ແລະ ວິຖີຊີວິດ ການປ່ຽນແປງໂຄງສ້າງຄອບຄົວ ແລະ ຄວາມຕ້ອງການຄວາມສະດວກສະບາຍຕາມຍຸກສະໄໝ (Modern Comforts) ເຊັ່ນ: ການຕິດຕັ້ງລະບົບປັບອາກາດ ແລະ ຫ້ອງນ້ຳພາຍໃນ.ປັດໃຈດ້ານເຕັກໂນໂລຊີການກໍ່ສ້າງ: ການເຂົ້າເຖິງວັດສະດຸທີ່ຄົງທົນ ແລະ ງ່າຍຕໍ່ການບຳລຸງຮັກສາ.ເຖິງຢ່າງໃດກໍຕາມ, ການປ່ຽນແປງດັ່ງກ່າວແມ່ນຢູ່ພາຍໃຕ້ຂໍ້ກຳນົດ ແລະ ລະບຽບການຄຸ້ມຄອງຂອງອົງການຢູເນສໂກ (UNESCO) ຢ່າງເຂັ້ມງວດເພື່ອຮັກສາຄຸນຄ່າທີ່ໂດດເດັ່ນເປັນສາກົນ. ຂໍ້ສະເໜີແນະຈາກການວິໄຈແມ່ນການສົ່ງເສີມການອອກແບບພາຍໃນທີ່ເນັ້ນການປະສົມປະສານ (Integration) ລະຫວ່າງອົງປະກອບແບບດັ້ງເດີມ ແລະ ຄວາມທັນສະໄໝ ໂດຍບໍ່ໃຫ້ທຳລາຍໂຄງສ້າງເດີມເພື່ອໃຫ້ເກີດຄວາມຍືນຍົງທາງດ້ານວັດທະນະທຳ (Taplin & Clark, 2002).

ດັ່ງນັ້ນ, ການສຶກສາປັດໃຈທີ່ມີຜົນຕໍ່ການປ່ຽນແປງຂອງສະຖາປັດຕະຍະກຳພາຍໃນເຮືອນທີ່ຢູ່ອາໄສ ໃນເຂດອານຸລັກເມືອງເກົ່ານະຄອນຫຼວງພະບາງຈຶ່ງມີຄວາມຈຳເປັນຢ່າງຍິ່ງເພື່ອວິເຄາະຫາສາເຫດ ແລະ ແນວໂນ້ມຂອງການປ່ຽນແປງ. ຜົນການສຶກສານີ້ຈະເປັນຂໍ້ມູນພື້ນຖານທີ່ສຳຄັນໃນການວາງແຜນອານຸລັກ ແລະ ພັດທະນາສະຖາປັດຕະຍະກຳພາຍໃນໃຫ້ສາມາດຮັກສາຄຸນຄ່າທາງປະຫວັດສາດໄປຄຽງຄູ່ກັບການພັດທະນາທີ່ຍືນຍົງການປ່ຽນແປງສະຖາປັດຕະຍະກຳພາຍໃນໃນເຂດເມືອງເກົ່າຫຼວງພະບາງ ແມ່ນຂະບວນການປັບຕົວເພື່ອຄວາມຢູ່ລອດຂອງອາຄານໃນບໍລິບົດຂອງໂລກສະໄໝໃໝ່. ເຖິງຢ່າງໃດກໍຕາມ , ການຮັກສາຄວາມສົມດຸນລະຫວ່າງການປັບປຸງເພື່ອຄວາມທັນສະໄໝ ແລະ ການຮັກສາຄຸນຄ່າທາງດ້ານປະຫວັດສາດ (Authenticity) ຍັງເປັນສິ່ງທ້າທາຍສຳຄັນ ທີ່ຕ້ອງອາໄສການອອກແບບທີ່ລະອຽດອ່ອນ ແລະ ການຄຸ້ມຄອງທີ່ເປັນລະບົບ (Phonesaly, 2018).

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງເພື່ອ 1) ສຶກສາລະດັບຄວາມຄິດເຫັນຕໍ່ ປັດໄຈການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ແລະ 2) ສຶກສາປັດໄຈທີ່ມີຜົນຕໍ່ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ນະຄອນ-ຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄ້ວາໃນຄັ້ງນີ້ ແມ່ນເປັນການຄົ້ນຄວ້າທາງດ້ານປະລິມານ (Quantitative) ໂດຍໃຊ້ແບບສອບຖາມ (Questionnaire) ໂດຍການສຳຫຼວດ (Survey ເກັບກຳຂໍ້ມູນໂດຍກົງຈາກກຸ່ມເປົ້າໝາຍ ໄດ້ນຳໃຊ້ແນວຄິດທິດສະດີການປ່ຽນແປງ (Weiss, 1995; Taplin & Clark, 2002).

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍ ຂອງການສຶກສາໃນຄັ້ງນີ້ ແມ່ນປະຊາຊົນ ທີ່ອາໄສຢູ່ໃນບ້ານ ເຂດອານຸລັກເມືອງເກົ່າ (UA) ນະຄອນຫຼວງພະບາງ ທີ່ມີເຮືອນຢູ່ອາໄສແບບມໍລະດົກຫຼາຍ

ກວ່າໝູ່ ຈຳນວນ 3 ບ້ານຄື: ບ້ານຊຽງທອງ, ບ້ານວັດແສນ ແລະ ບ້ານປ່າຂາມ ທີ່ຕັ້ງຢູ່ໃນເຂດ UA ຂອງເມືອງ ລວມທັງໝົດ 135 ຄົນ ໂດຍການເລືອກແບບເຈາະຈົງ (Creswell, 2014 & Etikan et al., 2016).

**2.2 ເຄື່ອງມືໃນການຄົ້ນຄ້ວາ**

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ ແມ່ນເປັນແບບສອບຖາມ ປະກອບມີ:

ພາກສ່ວນທີ 1: ຂໍ້ມູນກ່ຽວກັບ ປັດໄຈການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ນະຄອນຫຼວງພະບາງ ແມ່ນອີງໃສ່ຫຼັກການຂອງ UNESCO (2011) ເຊິ່ງປະກອບມີ ປັດໄຈດ້ານສັງຄົມ, ປັດໃຈດ້ານເສດຖະກິດ, ປັດໄຈດ້ານລະບຽບ ແລະ ກົດໝາຍ ແລະ ປັດໄຈດ້ານສະພາບແວດລ້ອມ. ລັກສະນະແບບສອບຖາມເປັນແບບ ມາດຕາສ່ວນ (Likert scale) ເປັນຄຳຖາມປາຍປິດ ເຊິ່ງແບ່ງອອກເປັນ 5 ລະດັບໃນການໃຫ້ຄະແນນ (Likert, 1932) ດັ່ງນີ້:

ຄະແນນ 5 ໝາຍເຖິງ ເຫັນດີຫຼາຍທີ່ສຸດ

ຄະແນນ 4 ໝາຍເຖິງ ເຫັນດີຫຼາຍ

ຄະແນນ 3 ໝາຍເຖິງ ເຫັນດີປານກາງ

ຄະແນນ 2 ໝາຍເຖິງ ເຫັນດີໜ້ອຍ

ຄະແນນ 1 ໝາຍເຖິງ ບໍ່ເຫັນດີ

ພາກສ່ວນທີ 3: ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ແມ່ນອີງໃສ່ຫຼັກການຂອງ Rapoport (1969). ລັກສະນະແບບສອບຖາມເປັນແບບ ມາດຕາສ່ວນ (Likert scale) ເປັນຄຳຖາມປາຍປິດ ເຊິ່ງແບ່ງອອກເປັນ 5 ລະດັບໃນການໃຫ້ຄະແນນ (Likert, 1932) ດັ່ງນີ້:

ຄະແນນ 5 ໝາຍເຖິງ ມີການປ່ຽນແປງຫຼາຍທີ່ສຸດ

ຄະແນນ 4 ໝາຍເຖິງ ມີການປ່ຽນແປງຫຼາຍ

ຄະແນນ 3 ໝາຍເຖິງ ມີການປ່ຽນແປງປານກາງ

ຄະແນນ 2 ໝາຍເຖິງ ມີການປ່ຽນແປງໜ້ອຍ

ຄະແນນ 1 ໝາຍເຖິງ ມີການປ່ຽນແປງໜ້ອຍທີ່ສຸດ

ພາກສ່ວນທີ 4: ຂໍ້ມູນແນວທາງການປັບປຸງຮູບແບບສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA)

**ການຫາຄຸນນະພາບຂອງເຄື່ອງມື (Validity and Reliability)**

- **ການກວດສອບຄວາມທ່ຽງ (Content Validity)**

ໂດຍຜູ້ຄົ້ນຄວ້າ ໄດ້ນຳແບບສອບຖາມໃຫ້ຜູ້ຊ່ຽວຊານ ຈຳນວນ 3 ທ່ານ ພິຈາລະນາ ຄວາມສອດຄ່ອງລະຫວ່າງ ຂໍ້ຄຳຖາມ ແລະ ຈຸດປະສົງ ຂອງການຄົ້ນຄວ້າ ເຊິ່ງເອີ້ນວ່າ ດັດຊະນີຄວາມສອດຄ່ອງ (Index of Item Objective Congruence: IOC). ສະນັ້ນ, ຄ່າດັດຊະນີຄວາມສອດຄ່ອງ ທີ່ສາມາດໃຊ້ໄດ້ແມ່ນຕ້ອງມີຄ່າຕັ້ງແຕ່ 0.50-1.00 ຈຶ່ງຖືວ່າ ແບບສອບຖາມ ສາມາດໄປທົດລອງໃຊ້ໄດ້ ແຕ່ຕ້ອງໄດ້ປັບປຸງຕາມຄຳແນະນຳຂອງຜູ້ຊ່ຽວຊານ ເພື່ອໃຫ້ໄດ້ແບບສອບຖາມທີ່ດີ (DeVellis, 2016). ຜົນການທົດສອບ ໄດ້ຄ່າສຳປະສິດຄວາມສອດຄ່ອງທັງໝົດຂອງແບບສອບຖາມ IOC = 0.97 ເຫັນວ່າ ມີຄ່າຄວາມທ່ຽງຕົງສອດຄ່ອງກັບເກນທີ່ກຳນົດໄວ້ຄື, ໝາຍຄວາມວ່າ ແບບສອບຖາມ ມີຄວາມສອດຄ່ອງ ແລະ ສາມາດໄປນຳໃຊ້ເປັນເຄື່ອງມືໃນການເກັບຂໍ້ມູນນຳກຸ່ມເປົ້າໝາຍໄດ້.

- **ການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມ (Reliability)**

ຜູ້ຄົ້ນຄວ້າ ໄດ້ນຳແບບສອບຖາມ ທີ່ຜ່ານການພິຈາລະນາ ຂອງຊ່ຽວຊານ ໄປທົດສອບ (Pilot Test) ເພື່ອໃຫ້ແນ່ໃຈວ່າ ຜູ້ຕອບແບບສອບຖາມ ມີຄວາມເຂົ້າໃຈກົງກັນ ແລະ ຕອບຄຳຖາມໄດ້ຕາມຄວາມເປັນຈິງທຸກຂໍ້ ລວມທັງຂໍ້ຄຳຖາມມີຄວາມສອດຄ່ອງທາງສະຖິຕິ. ດັ່ງນັ້ນ, ຜູ້ຄົ້ນຄວ້າ ໄດ້ນຳແບບສອບຖາມໄປທົດສອບກັບກຸ່ມຄົນ ທີ່ບໍ່ແມ່ນກຸ່ມເປົ້າໝາຍ ຈຳນວນ 30 ຄົນ, ຫຼັງຈາກນັ້ນ ນຳມາວິເຄາະຄວາມເຊື່ອໝັ້ນຂອງແບບສອບຖາມ ໂດຍໃຊ້ສະຖິຕິ ແລະ ພິຈາລະນາຈາກຄ່າສຳປະສິດ $\alpha$ ຂອງຄອນບາດ (Cronbach's Alpha Coefficient) ຂອງຄຳຖາມໃນແຕ່ລະດ້ານ ທີ່ມີຄ່າເທົ່າກັບ 0.70 ຫຼື 70% ຂຶ້ນໄປ ສະແດງວ່າ ແບບສອບຖາມທີ່ຈະນຳໄປໃຊ້ກັບກຸ່ມຕົວຢ່າງເປົ້າໝາຍ ມີຄວາມໜ້າເຊື່ອຖື ແລະ ສາມາດນຳແບບສອບຖາມໄປເກັບກຳຂໍ້ມູນກັບກຸ່ມຕົວຢ່າງຈິງໄດ້ (Cronbach, 1951). ຜົນການທົດສອບພົບວ່າ ໄດ້ຄ່າສຳປະສິດອານຟາ $\alpha=0.98$ ເຊິ່ງຜົນການທົດສອບຄ່າຄວາມເຊື່ອໝັ້ນ ຂອງແບບສອບຖາມ ແມ່ນສູງກວ່າເກນທີ່ກຳນົດໄວ້ ກໍ່ຄືສູງກວ່າ 0.70, ໝາຍຄວາມວ່າ ແບບສອບຖາມມີຄວາມໜ້າເຊື່ອຖື ແລະ ສາມາດນຳໄປໃຊ້ໃນການເກັບຂໍ້ມູນຕໍ່ໄປໄດ້.

### 2.3 ການເກັບກຳລວບລວມຂໍ້ມູນ.

#### 2.3.1 ຂໍ້ມູນຂັ້ນໜຶ່ງ (Primary Data)

ຂໍ້ມູນຂັ້ນໜຶ່ງ ເປັນຂໍ້ມູນທີ່ໄດ້ຈາກການລົງເກັບກຳຕົວຈິງ ໂດຍການແຈກຢາຍແບບສອບຖາມກ່ຽວກັບ ຂໍ້ມູນປັດໄຈການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ແລະ ຂໍ້ມູນການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ນະຄອນຫຼວງພະບາງ.

#### 2.3.2 ຂໍ້ມູນຂັ້ນສອງ (Secondary Data)

ຂໍ້ມູນຂັ້ນສອງ ເປັນແຫຼ່ງຂໍ້ມູນໄດ້ຈາກການທົບທວນເອກະສານທີ່ກ່ຽວຂ້ອງໄດ້ແກ່ ເອກະສານທີ່ກ່ຽວຂ້ອງກັບ ປັດໄຈ ແລະ ຄວາມຄິດເຫັນຕໍ່ ການປ່ຽນແປງສະຖາປັດຕະຍະກຳດ້ານສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ນະຄອນຫຼວງພະບາງ, ການຄົ້ນຄວ້າທີ່ກ່ຽວຂ້ອງ, ບົດຈົບຊັ້ນ, ບົດຄວາມທາງວິຊາການ, ບົດວິທະຍານິພົນ ແລະ ນອກຈາກນັ້ນ ຍັງໄດ້ຂໍ້ມູນຕ່າງໆທີ່ກ່ຽວຂ້ອງຈາກເວບໄຊທ໌.

### 3.4 ວິທີການວິເຄາະຂໍ້ມູນ

ວິເຄາະຂໍ້ມູນ ໂດຍການຫາຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ ແລະ ວິເຄາະການຖົດຖອຍແບບພະຫຸຄູນ ກ່ຽວກັບການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສໃນເຂດອານຸລັກເມືອງເກົ່າ (UA) ນະຄອນຫຼວງພະບາງ.

**ເກນການແປຄວາມໝາຍ ຂອງຄ່າສະເລ່ຍ**

- ໃຊ້ເກນແປຄວາມໝາຍຕາມແນວຄວາມຄິດຂອງ Kothari (2004) ສຳລັບອະທິບາຍລະດັບຄວາມຄິດເຫັນຕໍ່ປັດໄຈການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ມີດັ່ງນີ້:

ຄ່າສະເລ່ຍ 4.21 - 5.00 ໝາຍເຖິງເຫັນດີຫຼາຍທີ່ສຸດ/ມີການປ່ຽນແປງຫຼາຍທີ່ສຸດ

ຄ່າສະເລ່ຍ 3.41 - 4.20 ໝາຍເຖິງເຫັນດີຫຼາຍ/ມີການປ່ຽນແປງຫຼາຍ

ຄ່າສະເລ່ຍ 2.61 - 3.40 ໝາຍເຖິງເຫັນດີປານກາງ/ມີການປ່ຽນແປງປານກາງ

ຄ່າສະເລ່ຍ 1.81 - 2.60 ໝາຍເຖິງເຫັນດີໜ້ອຍທີ່ສຸດ/ມີການປ່ຽນແປງໜ້ອຍ

ຄ່າສະເລ່ຍ 1.00 - 1.80 ໝາຍເຖິງ ບໍ່ເຫັນດີ/ມີການປ່ຽນແປງໜ້ອຍທີ່ສຸດ

## 3. ຜົນໄດ້ຮັບ

### 3.1 ລະດັບຄວາມຄິດເຫັນຕໍ່ປັດໄຈການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ນະຄອນຫຼວງພະບາງ

ຜົນການວິເຄາະຂໍ້ມູນ ລະດັບຄວາມຄິດເຫັນຕໍ່ປັດໄຈການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສໃນເຂດອານຸລັກເມືອງເກົ່າ (UA) ນະຄອນຫຼວງພະບາງ ພົບວ່າ ໂດຍລວມແມ່ນເຫັນດີຢູ່ໃນລະດັບປານກາງ ໂດຍມີ ຄ່າສະເລ່ຍ $\overline{X} = 3.14$ ແລະ SD = 0.31, ເມື່ອພິຈາລະນາປັດໄຈແຕ່ລະດ້ານແລ້ວ ເຫັນວ່າ:

1) ຄວາມຄິດເຫັນຕໍ່ປັດໄຈດ້ານສັງຄົມ ໂດຍລວມແມ່ນຢູ່ໃນລະດັບເຫັນດີປານກາງ ໂດຍມີ ຄ່າສະເລ່ຍ $\overline{X} = 3.01$ ແລະ SD = 0.76, ແຕ່ເມື່ອພິຈາລະນາເປັນແຕ່ລະປັດໄຈຍ່ອຍແລ້ວຈະເຫັນໄດ້ວ່າ ຄ່ານິຍົມຂອງສັງຄົມ ສິ່ງຜົນໃຫ້ບຸກຄົນຕ້ອງໄດ້ປັບປ່ຽນຮູບແບບການດຳລົງຊີວິດ ຫຼື ການຕົກແຕ່ງເຮືອນຢູ່ອາໄສ ເພື່ອໃຫ້ສອດຄ່ອງ ກັບການດຳລົງຊີວິດໃນຍຸກປະຈຸບັນ (ສະພາບແວດລ້ອມອ້ອມຂ້າງ) ມີຄ່າສະເລ່ຍ ຫຼາຍກວ່າໝູ່ ມີຄ່າສະເລ່ຍ $\overline{X} = 3.39$ ແລະ SD = 0.76 ແລະ ຮອງລົງມາແມ່ນຮູບແບບການດຳລົງຊີວິດທີ່ປ່ຽນແປງ ເຊັ່ນ: ຕ້ອງການພື້ນທີ່ຄອບຄົວ, ຕ້ອງການພື້ນທີ່ສາທາລະນະ(ພື້ນທີ່ບໍລິການ) ໂດຍມີຄ່າສະເລ່ຍ $\overline{X} = 3.36$ ແລະ SD = 0.78. ສ່ວນດ້ານທີ່ມີຄວາມເຫັນດີໃນລະດັບປານກາງ ໄດ້ແກ່ ສື່ສັງຄົມອອນລາຍ ແລະ ແນວໂນ້ມ (Trends) ການຕົກແຕ່ງເຮືອນໃນສັງຄົມມີຜົນຕໍ່ການຕັດສິນໃຈປ່ຽນແປງ ຫຼື ຈັດແຈງພື້ນທີ່ພາຍໃນເຮືອນໃໝ່ ມີຄ່າສະເລ່ຍ $\overline{X} = 2.89$ ແລະ SD = 0.84, ການປ່ຽນແປງຈຳນວນສະມາຊິກພາຍໃນຄອບຄົວເພີ່ມຂຶ້ນມີຜົນຕໍ່ການຕັດສິນໃຈປັບປ່ຽນການຈັດສັນພາຍໃນເຮືອນຢູ່ອາໄສ ມີຄ່າສະເລ່ຍ $\overline{X} = 2.85$ ແລະ SD = 0.85, ແນວຄິດ ແລະ ຄວາມເຊື່ອໃນຍຸກປັດຈຸບັນ ເຊັ່ນ: ການຮັບເອົາວັດທະນະທຳການຕົກແຕ່ງ ຫຼື ຮູບແບບທີ່ທັນສະໄໝເຂົ້າມານຳໃຊ້ ມີຄ່າສະເລ່ຍ $\overline{X} = 2.84$ ແລະ SD = 0.69, ແລະ ສຸດທ້າຍແມ່ນສະພາບການພັດທະນາຜັງເມືອງໃນເຂດມໍລະດົກເຮັດໃຫ້ອາຄານມີການປ່ຽນແປງ ໂດຍມີຄ່າສະເລ່ຍ $\overline{X} = 2.75$ ແລະ SD = 0.76 ຕາມລຳດັບ.

2) ລະດັບຄວາມຄິດເຫັນຕໍ່ ດ້ານເສດຖະກິດ ໂດຍລວມແມ່ນເຫັນດີຢູ່ໃນລະດັບປານກາງ ໂດຍມີ ຄ່າສະເລ່ຍ $\overline{X} = 3.31$ ແລະ SD = 0.73, ແຕ່ເມື່ອພິຈາລະນາເປັນແຕ່ລະປັດໄຈຍ່ອຍແລ້ວຈະເຫັນໄດ້ວ່າ ດ້ານທີ່ມີຄ່າ

ສະເລ່ຍຢູ່ໃນລະດັບຫຼາຍ ໄດ້ແກ່ ການຂະຫຍາຍຕົວຂອງອຸດສາຫະກຳການທ່ອງທ່ຽວເຮັດໃຫ້ອາຄານມໍລະດົກມີການຫັນປ່ຽນໄປເປັນການນຳໃຊ້ທາງພານິດຫຼາຍຂຶ້ນ ມີຄ່າສະເລ່ຍ $\overline{X}$ = 3.51 ແລະ SD = 0.81, ສ່ວນດ້ານທີ່ມີຄວາມເຫັນດີໃນລະດັບປານກາງ ໄດ້ແກ່ ຄວາມຕ້ອງການມູນຄ່າເພີ່ມທາງເສດຖະກິດຂອງຄອບຄົວ ໂດຍມີຄ່າສະເລ່ຍ $\overline{X}$ = 3.30 ແລະ SD = 0.83, ຕ້ອງການລາຍຮັບເພີ່ມຂຶ້ນ ແລະ ການດຳລົງຊີວິດທີ່ດີຈຶ່ງມີການປ່ຽນແປງສະພາບພາຍໃນເຮືອນ ມີຄ່າສະເລ່ຍ $\overline{X}$ = 3.29 ແລະ SD = 0.66, ຕົ້ນທຶນການບຳລຸງຮັກສາເຮືອນມໍລະດົກມີຄ່າໃຊ້ຈ່າຍສູງເຮັດໃຫ້ມີການປ່ຽນແປງພື້ນທີ່ພາຍໃນ ມີຄ່າສະເລ່ຍ $\overline{X}$ = 3.28 ແລະ SD = 0.65, ຕ້ອງການໃຊ້ພື້ນທີ່ເພື່ອຕອບສະໜອງອຸດສາຫະກຳການທ່ອງທ່ຽວ ເຊັ່ນ: ເປີດເປັນຮ້ານຄ້າ, ຮ້ານກາເຟ, ເຮືອນພັກ ແລະ ອື່ນໆ ໂດຍມີຄ່າສະເລ່ຍ $\overline{X}$ = 3.27 ແລະ SD = 0.62 ແລະ ສຸດທ້າຍແມ່ນການແຂ່ງຂັນທາງທຸລະກິດສິ່ງຜົນໃຫ້ມີການປັບປ່ຽນໃຫ້ດີຂຶ້ນ ແລະ ໃຫ້ທັນສະໄໝ ມີຄ່າສະເລ່ຍ $\overline{X}$ = 3.19 ແລະ SD = 0.73 ຕາມລຳດັບ.

3) ລະດັບຄວາມຄິດເຫັນຕໍ່ ດ້ານລະບຽບ ແລະ ກົດໝາຍ ໂດຍລວມແມ່ນເຫັນດີຢູ່ໃນລະດັບປານກາງ ໂດຍມີ ຄ່າສະເລ່ຍ $\overline{X}$ = 3.01 ແລະ SD = 0.76, ແຕ່ເມື່ອພິຈາລະນາເປັນແຕ່ລະປັດໄຈຍ່ອຍແລ້ວຈະເຫັນໄດ້ວ່າ ແຕ່ລະຂໍ້ມີຄ່າສະເລ່ຍຢູ່ໃນລະດັບປານກາງຄືກັນໝົດ ໄດ້ແກ່ ລະບຽບຄຸ້ມຄອງເຮືອນມໍລະດົກມີຜົນຕໍ່ການປ່ຽນແປງ ພື້ນທີ່ພາຍໃນ ມີຄ່າສະເລ່ຍ $\overline{X}$ = 3.39 ແລະ SD = 0.72, ມີກົດໝາຍ ແລະ ລະບຽບເປັນແນວທາງໃນການປັບປຸງ ແລະ ຟື້ນຟູອາຄານມໍລະດົກ ແລະ ເປີດຊ່ອງທາງໃຫ້ສາມາດປັບປຸງພື້ນທີ່ ພາຍໃນໄດ້ ມີຄ່າສະເລ່ຍ $\overline{X}$ = 3.36 ແລະ SD = 0.78, ແນວທາງການອະນຸລັກເຮືອນມໍລະດົກມີຜົນຕໍ່ການປ່ຽນແປງ ອາຄານຄານພາຍໃນ ມີຄ່າສະເລ່ຍ $\overline{X}$ = 2.89 ແລະ SD = 0.84, ກົດລະບຽບຄຸ້ມຄອງຮູບຊົງພາຍນອກຂອງອາຄານມໍລະດົກໂລກມີຄວາມເຂັ້ມງວດ ແຕ່ຍັງບໍ່ມີການຄຸ້ມຄອງທາງດ້ານການຕົກແຕ່ງພາຍໃນອາຄານເຂັ້ມງວດ ມີຄ່າສະເລ່ຍ $\overline{X}$ = 2.85 ແລະ SD = 0.85, ໜ່ວຍງານທີ່ກ່ຽວຂ້ອງກັບກົດລະບຽບ ແລະ ແຜນການອະນຸລັກອາຄານມໍລະດົກໂລກ ມີບົດບາດສຳຄັນຕໍ່ຂອບເຂດການປັບປ່ຽນພາຍໃນອາຄານ ມີຄ່າສະເລ່ຍ $\overline{X}$ = 2.84 ແລະ SD = 0.69 ແລະ ສຸດທ້າຍແມ່ນຂໍ້ຈຳກັດຂອງໜ່ວຍງານທີ່ຮັບຜິດຊອບໃນການຕິດຕາມກວດກາເປັນປົກກະຕິສິ່ງຜົນໃຫ້ມີການປ່ຽນແປງ ມີຄ່າສະເລ່ຍ $\overline{X}$ = 2.75 ແລະ SD = 0.71 ຕາມລຳດັບ.

4) ລະດັບຄວາມຄິດເຫັນຕໍ່ ປັດໄຈດ້ານສະພາບແວດລ້ອມ ໂດຍລວມແມ່ນເຫັນດີຢູ່ໃນລະດັບປານກາງ ໂດຍມີ ຄ່າສະເລ່ຍ $\overline{X}$ = 3.22 ແລະ SD = 0.67, ແຕ່ເມື່ອພິຈາລະນາເປັນແຕ່ລະປັດໄຈຍ່ອຍແລ້ວຈະເຫັນໄດ້ວ່າ ດ້ານທີ່ມີຄ່າສະເລ່ຍຢູ່ໃນລະດັບຫຼາຍ ໄດ້ແກ່ ການຈະລາຈອນທີ່ເພີ່ມຂຶ້ນ, ມົນລະພິດ, ແລະ ການພັດທະນາໃນບໍລິເວນໃກ້ຄຽງສິ່ງຜົນກະທົບທາງລົບຕໍ່ຄຸນນະພາບສິ່ງແວດລ້ອມອ້ອມຮອບອາຄານມໍລະດົກ ມີຄ່າສະເລ່ຍ $\overline{X}$ = 3.61 ແລະ SD = 0.51, ການປະຕິບັດການອະນຸລັກໃນປະຈຸບັນໄດ້ແກ້ໄຂຄວາມຍືນຍົງດ້ານສິ່ງແວດລ້ອມ (ການລະບາຍອາກາດ, ການລະບາຍນ້ຳ, ແສງສະຫວ່າງທຳມະຊາດ) ໃນອາຄານມໍລະດົກຢ່າງພຽງພໍ ມີຄ່າສະເລ່ຍ $\overline{X}$ = 3.45 ແລະ SD = 0.50, ສ່ວນດ້ານທີ່ມີຄວາມເຫັນດີໃນລະດັບປານກາງ ໄດ້ແກ່ ການປ່ຽນແປງທາງດ້ານສະພາບດິນຟ້າອາກາດສິ່ງຜົນໃຫ້ມີຄວາມຕ້ອງການປັບປຸງພາຍໃນອາຄານມໍລະດົກເພື່ອໃຫ້ເກີດພາວະຢູ່ສະບາຍ ແລະ ປອດໄພ ເຊັ່ນ: ການຕິດຕັ້ງເຄື່ອງປັບອາກາດ, ການຕິດຕັ້ງເຄື່ອງກອງອາກາດ, ເຟີນິເຈີ ແລະ ເຄື່ອງເຮືອນອື່ນໆ ມີຄ່າສະເລ່ຍ $\overline{X}$ = 3.36 ແລະ SD = 0.78, ວັດສະດຸພາຍໃນເຮືອນເກົ່າໝົດຄຸນນະພາບ ແລະ ມີວັດສະດຸສະໄໝໃໝ່ຈຶ່ງພາໃຫ້ມີການຕົກແຕ່ງ ແລະ ປ່ຽນແປງພາຍໃນອາຄານຄືນເກົ່າ ມີຄ່າສະເລ່ຍ $\overline{X}$ = 2.85 ແລະ SD = 0.85 ແລະ ສຸດທ້າຍແມ່ນກົດລະບຽບການຄຸ້ມຄອງສະພາບແວດລ້ອມມີຜົນຕໍ່ຄວາມຕ້ອງການປັບປຸງພາຍໃນອາຄານເພື່ອໃຫ້ສອດຄ່ອງກັບການໃຊ້ງານ ແລະ ກົດລະບຽບຂອງພາກລັດ ມີຄ່າສະເລ່ຍ $\overline{X}$ = 2.84 ແລະ SD = 0.69 ຕາມລຳດັບ.

ລະດັບຄວາມຄິດເຫັນຕໍ່ ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໂດຍລວມແມ່ນມີການປ່ຽນແປງຢູ່ໃນລະດັບຫຼາຍ ໂດຍມີ ຄ່າສະເລ່ຍ $\overline{X}$ = 3.63 ແລະ SD = 0.58, ແຕ່ເມື່ອພິຈາລະນາເປັນແຕ່ລະດ້ານແລ້ວ ເຫັນໄດ້ວ່າ ດ້ານທີ່ມີການປ່ຽນແປງຫຼາຍທີ່ສຸດ ໄດ້ແກ່ ພື້ນທີ່ໃຊ້ສອຍພາຍໃນ (ການປ່ຽນຜັງຫ້ອງໃໝ່ເກືອບທັງໝົດ ເພື່ອຮອງຮັບທຸລະກິດ ແລະ ສິ່ງອຳນວຍຄວາມສະດວກ ມີຄ່າສະເລ່ຍ $\overline{X}$ = 4.45 ແລະ SD = 0.50, ສ່ວນການປ່ຽນແປງຢູ່ໃນ

ລະດັບຫຼາຍ ໄດ້ແກ່ ຕໍ່ມາແມ່ນຊັ້ນລຸ່ມ/ໃຕ້ຖຸນ (ການອັດໃຕ້ຖຸນເຮືອນໄມ້ໃຫ້ເປັນຫ້ອງກໍ່ດິນຈີ່ ເພື່ອເພີ່ມພື້ນທີ່ໃຊ້ສອຍ) ມີຄ່າສະເລ່ຍ $\overline{X}$ = 3.83 ແລະ SD = 0.64, ໂຄງສ້າງຫຼັງຄາ (ການປ່ຽນວັດສະດຸມຸງຈາກດິນຂໍເປັນວັດສະດຸທົດແທນ ແຕ່ຮັກສາຮູບຊົງເດີມ) ມີຄ່າສະເລ່ຍ $\overline{X}$ = 3.56 ແລະ SD = 0.58, ປະຕູ ແລະ ປ່ອງຢ້ຽມ (ການປ່ຽນຮູບແບບມືຈັບ, ການໃສ່ແກ້ວ ແລະ ການຕິດຕັ້ງເຄື່ອງປັບອາກາດ) ມີຄ່າສະເລ່ຍ $\overline{X}$ = 3.46 ແລະ SD = 0.74, ສ່ວນດ້ານທີ່ມີການປ່ຽນແປງລະດັບປານກາງ ໄດ້ແກ່ ວັດສະດຸຝາ ແລະ ພື້ນ (ການປ່ຽນຈາກໄມ້ເປັນເບຕົງ ຫຼື ເພີ່ມການບຸຝາດ້ວຍວັດສະດຸສະໄໝໃໝ່) ມີຄ່າສະເລ່ຍ $\overline{X}$ = 3.24 ແລະ SD = 0.52 ແລະ ສຸດທ້າຍແມ່ນຮູບລັກສະນະພາຍນອກ (ມີການປ່ຽນແປງໜ້ອຍທີ່ສຸດ ເນື່ອງຈາກມີລະບຽບການຄຸ້ມຄອງທີ່ເຂັ້ມງວດ) ມີຄ່າສະເລ່ຍ $\overline{X}$ = 3.21 ແລະ SD = 0.51.

**3.2 ປັດໄຈທີ່ມີຜົນຕໍ່ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA)**

ຈາກການວິເຄາະຂໍ້ມູນ ພົບວ່າ ຄ່າສຳປະສິດສະຫະສຳພັນ ຂອງຕົວປ່ຽນອິດສະຫຼະແຕ່ລະຄູ່ ມີຄ່ານ້ອຍກວ່າ 0.8, ສະແດງວ່າ ຕົວປ່ຽນອິດສະຫຼະຂອງສົມຜົນໃນແບບຈຳລອງຂອງການຄົ້ນຄວ້າບໍ່ມີບັນຫາພະຫຸສຳພັນ ຂອງຕົວປ່ຽນອິດສະຫຼະ (Multi-collinearity). ສະນັ້ນ, ປັດໄຈດ້ານສັງຄົມ ($X_1$), ປັດໄຈດ້ານເສດຖະກິດ ($X_2$), ປັດໄຈດ້ານລະບຽບ ແລະ ກົດໝາຍ ($X_3$) ແລະ ປັດໄຈດ້ານສິ່ງແວດລ້ອມ ($X_4$) ໄປປະເມີນສົມຜົນການຖົດຖອຍແບບຈຳລອງສົມຜົນການຖົດຖອຍແບບພະຫຸຜົດ ດ້ວຍວິທີຂອງ Enter ເພື່ອພະຍາກອນທີ່ມີຜົນຕໍ່ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ.

ໃນນັ້ນ, ການວິເຄາະຄວາມສຳພັນ ລະຫວ່າງປັດໄຈດ້ານຕ່າງໆ ທີ່ມີຜົນຕໍ່ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ ດ້ວຍວິທີການວິເຄາະທາງສະຖິຕິແບບຖົດຖອຍພະຫຸຜົດ ແລະ ການປະເມີນຄ່າດ້ວຍວິທີການນຳເອົາຕົວປ່ຽນທັງໝົດ ເຂົ້າໄປໃນສົມຜົນ ເປັນການວິເຄາະສົມຜົນການຖົດຖອຍພະຫຸຄູນ ແບບຂັ້ນຕອນ (Multiple regression analysis) ເຊິ່ງການຄົ້ນຄວ້າຄັ້ງນີ້ປະກອບຕົວປ່ຽນອິດສະຫຼະທີ່ເປັນປັດໄຈທັງໝົດ 4 ຕົວປ່ຽນ ເຊິ່ງປັດໄຈທີ່ມີຄວາມສຳພັນກັບການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ (Y) ປະກອບມີ 2 ປັດໄຈ ທີ່ມີຄວາມສຳພັນໃນທິດທາງດຽວກັນ ແລະ ຈັດລຽງແຕ່ມີຄວາມສຳພັນຫຼາຍມາຫາໜ້ອຍຕາມລຳດັບ ໄດ້ແກ່: ປັດໄຈດ້ານສັງຄົມ ($X_1$) ມີຄວາມສຳພັນຫຼາຍກວ່າໝູ່ ເຊິ່ງມີຄ່າ R=0.298 ແລະ P-value = 0.000 ແລະ ປັດໄຈດ້ານສິ່ງແວດລ້ອມ ($X_4$) ເຊິ່ງມີຄ່າ R=0.172 ແລະ P-value = 0.023.

ແບບຈຳລອງທີ່ໄດ້ຈາກການຖົດຖອຍພະຫຸຄູນ ຫຼື ການພະຍາກອນ (Model Summary) ຂອງການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ ເຫັນວ່າຕົວປ່ຽນອິດສະຫຼະ ໄດ້ແກ່ ປັດໄຈດ້ານສັງຄົມ ($X_1$) ແລະ ປັດໄຈດ້ານສິ່ງແວດລ້ອມ ($X_4$) ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ແມ່ນມີການພົວພັນກັບ ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ (Y) ເຊິ່ງມີຄ່າຂອງ R = 0.217 ຫຼື ສາມາດໃຊ້ໄດ້ເຖິງ 21.70% ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ 0.23828 ເຊິ່ງໝາຍເຖິງຄວາມຜິດພາດທີ່ເກີດຈາກການພະຍາກອນ ໂດຍສະເລ່ຍຂອງຕົວປ່ຽນອິດສະຫຼະທັງໝົດ ທີ່ມີຜົນຕໍ່ຕົວປ່ຽນຕາມ ເທົ່າກັບ 23.828%.

ຜົນການວິເຄາະການຖົດຖອຍພະຫຸຄູນ ປັດໄຈທີ່ມີຜົນຕໍ່ການປ່ຽນແປງສະຖາ ປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ ພົບວ່າ ປັດໄຈດ້ານສັງຄົມ ແລະ ປັດໄຈດ້ານສິ່ງແວດລ້ອມ ແມ່ນມີຜົນຕໍ່ການປ່ຽນແປງສະຖາ ປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ ດ້ວຍລະດັບຄວາມສຳຄັນທາງສະຖິຕິ. ໃນນັ້ນ ປັດໄຈດ້ານສັງຄົມ ແມ່ນມີຜົນຕໍ່ການປ່ຽນແປງສະຖາ ປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງຫຼາຍທີ່ສຸດ ເຊິ່ງມີຄ່າສຳປະສິດການຖົດຖອຍເທົ່າກັບ 0.272 ແລະ ຕໍ່ມາແມ່ນປັດໄຈດ້ານສິ່ງແວດລ້ອມ ມີຄ່າສຳປະສິດການຖົດຖອຍເທົ່າກັບ 0.193.

ສະນັ້ນ, ຈຶ່ງສາມາດນຳເອົາຄ່າສຳປະສິດການຖົດຖອຍພະຫຸຄູນ ຂອງຕົວປ່ຽນພະຍາກອນ ທີ່ມາຂຽນເປັນສົມ

ຜົນພະຍາກອນ ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ (Y) ໃນຮູບແບບຄະແນນດິບ ຈະໄດ້ສົມຜົນການຖົດຖອຍແບບພະຫຸຄູນ ດັ່ງນີ້:

$$Y = 3.894 + 0.272X_1 + 0.193X_4$$

ສົມຜົນພະຍາກອນການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ (Y) ໃນຮູບແບບຄະແນນມາດຖານ ຈະໄດ້ສົມຜົນການຖົດຖອຍແບບພະຫຸຄູນ ດັ່ງນີ້:

$$Y' = 0.464X_1 + 0.012X_4$$

ສະນັ້ນ, ຜົນການທົດສອບຄ່າ Sig ມີຄ່ານ້ອຍກວ່າລະດັບຄວາມສຳຄັນ 0.05 ໝາຍຄວາມວ່າ ປັດໄຈດ້ານສັງຄົມ ແລະ ປັດໄຈດ້ານສິ່ງແວດລ້ອມ ແມ່ນມີຜົນຕໍ່ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ. ເມື່ອພິຈາລະນາຕົວປ່ຽນອິດສະຫຼະ ທີ່ມີອຳນາດໃນການພະຍາກອນ ແລະ ສາມາດອະທິບາຍຄວາມປ່ຽນແປງ ດ້ານຄຸນະພາບການໃຫ້ບໍລິການ ທີ່ມີຜົນຕໍ່ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ ໄດ້ເຖິງ 27.20%.

## 4. ວິພາກຜົນ

### 4.1 ລະດັບຄວາມຄິດເຫັນຕໍ່ປັດໄຈການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ນະຄອນຫຼວງພະບາງ

1) ຄວາມຄິດເຫັນຕໍ່ປັດໄຈດ້ານສັງຄົມ ເຫັນວ່າ ຄ່ານິຍົມຂອງສັງຄົມ ສິ່ງຜົນໃຫ້ບຸກຄົນຕ້ອງໄດ້ປັບປ່ຽນຮູບແບບການດຳລົງຊີວິດ ຫຼື ການຕົກແຕ່ງເຮືອນຢູ່ອາໄສ ເພື່ອໃຫ້ສອດຄ່ອງ ກັບການດຳລົງຊີວິດໃນຍຸກປະຈຸບັນ (ສະພາບແວດລ້ອມອ້ອມຂ້າງ) ແລະ ຮູບແບບການດຳລົງຊີວິດທີ່ປ່ຽນແປງ ເຊັ່ນ: ຕ້ອງການພື້ນທີ່ຄອບຄົວ, ຕ້ອງການພື້ນທີ່ສາທາລະນະ (ພື້ນທີ່ບໍລິການ) ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Manithong (2026) ໄດ້ສຶກສາສະພາບການປ່ຽນແປງສະຖາປັດຕະຍະກຳອາຄານຢູ່ອາໄສໃນເຂດ UA ຂອງນະຄອນຫຼວງພະບາງ, ຜົນການສຶກສາພົບວ່າ ປະຊາຊົນມີຄວາມຄິດເຫັນວ່າ ປັດໄຈດ້ານສັງຄົມ ແມ່ນເຮັດໃຫ້ມີການດັດແປງພາຍໃນເຮືອນຢູ່ອາໄສໃນລະດັບຫຼາຍ, ການປ່ຽນແປງທີ່ພົບເຫັນຫຼາຍ ໄດ້ແກ່ ການແບ່ງຫ້ອງໃໝ່, ການປັບປຸງຫ້ອງນ້ຳ, ການໃຊ້ວັດສະດຸທັນສະໄໝ ແລະ ການປັບພື້ນທີ່ໃຫ້ຮອງຮັບການທ່ອງທ່ຽວ.

2) ຄວາມຄິດເຫັນຕໍ່ປັດໄຈດ້ານເສດຖະກິດ ເຫັນວ່າ ການຂະຫຍາຍຕົວຂອງອຸດສາຫະກຳການທ່ອງທ່ຽວເຮັດໃຫ້ອາຄານມໍລະດົກມີການຫັນປ່ຽນໄປເປັນການນຳໃຊ້ທາງພານິດຫຼາຍຂຶ້ນ ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Vongvilay, et al. (2015) ໄດ້ສຶກສາປັດໄຈທີ່ກໍ່ໃຫ້ເກີດການປ່ຽນແປງເຮືອນລາວດັ້ງເດີມໃນ ນະຄອນຫຼວງພະບາງ ໂດຍສຳພາດເຈົ້າຂອງເຮືອນ ແລະ ສຳຫຼວດຮູບແບບອາຄານ, ຜົນການສຶກສາ ພົບວ່າ ຊາວບ້ານມີຄວາມຄິດເຫັນວ່າ ການປັບປຸງພາຍໃນເຮືອນເປັນສິ່ງຈຳເປັນ ເພາະຕ້ອງການໃຫ້ເໝາະສົມກັບຊີວິດສະໄໝໃໝ່, ການຮັບນັກທ່ອງທ່ຽວ ແລະ ການເພີ່ມລາຍຮັບ, ປັດໄຈສຳຄັນທີ່ສຸດ ຄື ດ້ານເສດຖະກິດ ແລະ ການປ່ຽນແປງວິຖີຊີວິດ ແລະ ສອດຄ່ອງກັບ Suntikul (2011) ໄດ້ສຶກສາການເຊື່ອມໂຍງລະຫວ່າງນະໂຍບາຍມໍລະດົກ, ການທ່ອງທ່ຽວ ແລະ ທຸລະກິດໃນຫຼວງພະບາງ, ຜົນການສຶກສາພົບວ່າ ເຈົ້າຂອງເຮືອນຫຼາຍຄົນຍັງເຫັນວ່າ ການດັດແປງອາຄານເພື່ອການຄ້າເປັນວິທີສຳຄັນໃນການສ້າງລາຍຮັບ.

3) ຄວາມຄິດເຫັນຕໍ່ປັດໄຈດ້ານລະບຽບ ແລະ ກົດໝາຍ ເຫັນວ່າ ລະບຽບຄຸ້ມຄອງເຮືອນມໍລະດົກມີຜົນຕໍ່ການປ່ຽນແປງ ພື້ນທີ່ພາຍໃນ, ມີກົດໝາຍ ແລະ ລະບຽບເປັນແນວທາງໃນການປັບປຸງ ແລະ ຟື້ນຟູອາຄານມໍລະດົກ ແລະ ເປີດຊ່ອງທາງໃຫ້ສາມາດປັບປຸງພື້ນທີ່ ພາຍໃນໄດ້, ແນວທາງການອະນຸລັກເຮືອນມໍລະດົກມີຜົນຕໍ່ການປ່ຽນແປງ ອາຄານຄານພາຍໃນ, ກົດລະບຽບຄຸ້ມຄອງຮູບຊົງພາຍນອກຂອງອາຄານມໍລະດົກໂລກມີຄວາມເຂັ້ມງວດ ແຕ່ຍັງບໍ່ມີການຄຸ້ມຄອງທາງດ້ານການຕົກແຕ່ງພາຍໃນອາຄານເຂັ້ມງວດ, ໜ່ວຍງານທີ່ກ່ຽວຂ້ອງກັບກົດລະບຽບ ແລະ ແຜນການອະນຸລັກອາຄານມໍລະດົກໂລກ ມີບົດບາດສຳຄັນຕໍ່ຂອບເຂດການປັບປ່ຽນພາຍໃນອາຄານ ແລະ ສຸດທ້າຍແມ່ນຂໍ້ຈຳກັດຂອງໜ່ວຍງານທີ່ຮັບຜິດຊອບໃນການຕິດຕາມກວດກາເປັນປົກກະຕິສິ່ງຜົນໃຫ້ມີການປ່ຽນແປງ ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Suntikul (2011) ໄດ້ສຶກສາການເຊື່ອມໂຍງລະຫວ່າງ ນະໂຍບາຍມໍລະດົກ, ການທ່ອງທ່ຽວ ແລະ ທຸລະກິດໃນຫຼວງພະບາງ, ຜົນການສຶກສາພົບວ່າ ປະຊາຊົນມີຄວາມຄິດເຫັນວ່າ ກົດລະບຽບອະນຸລັກຊ່ວຍຮັກສາຮູບແບບພາຍນອກຂອງອາຄານ ແຕ່

ບາງຄັ້ງກໍເປັນອຸປະສັກຕໍ່ການປັບປຸງພາຍໃນໃຫ້ສະດວກສະບາຍ..

4) ຄວາມຄິດເຫັນຕໍ່ປັດໄຈດ້ານສະພາບແວດລ້ອມ ເຫັນວ່າ ການຈະລາຈອນທີ່ເພີ່ມຂຶ້ນ, ມົນລະພິດ ແລະ ການພັດທະນາໃນບໍລິເວນໃກ້ຄຽງສົ່ງຜົນກະທົບທາງລົບ ຕໍ່ຄຸນນະພາບສິ່ງແວດລ້ອມອ້ອມຮອບອາຄານມໍລະດົກ, ການປະຕິບັດການອະນຸລັກໃນປະຈຸບັນໄດ້ແກ້ໄຂຄວາມຍືນຍົງດ້ານສິ່ງແວດລ້ອມ (ການລະບາຍອາກາດ, ການລະບາຍນໍ້າ, ແສງສະຫວ່າງທໍາມະຊາດ) ໃນອາຄານມໍລະດົກຢ່າງພຽງພໍ ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Leong et al. (2017) ໄດ້ສຶກສາຜົນກະທົບຂອງການທ່ອງທ່ຽວຕໍ່ພູມສັນຖານສະຖາປັດຕະຍະກໍາໃນເຂດມໍລະດົກຫຼວງພະບາງ, ຜົນການສຶກສາພົບວ່າ ປະຊາຊົນໃນເຂດ UA ມີຄວາມຄິດເຫັນໃນລະດັບສູງວ່າ ການດັດແປງເຮືອນໃຫ້ເປັນເຮືອນພັກ ຫຼື ຮ້ານຄ້າ ຊ່ວຍສ້າງລາຍຮັບ ແລະ ພັດທະນາຄຸນນະພາບຊີວິດ, ແຕ່ໃນຂະນະດຽວກັນ ກໍ່ມີຄວາມກັງວົນວ່າ ການປ່ຽນແປງຫຼາຍເກີນໄປອາດຈະເຮັດໃຫ້ສູນເສຍເອກະລັກດັ້ງເດີມຂອງເມືອງມໍລະດົກ.

ສະຫຼຸບແລ້ວ, ລະດັບຄວາມຄິດເຫັນຕໍ່ ການປ່ຽນແປງຂອງສະຖາປັດຕະຍະກໍາພາຍໃນເຮືອນທີ່ຢູ່ອາໄສຢູ່ໃນເຂດການຄຸ້ມຄອງມໍລະດົກໂລກ UA ໂດຍລວມແມ່ນເຫັນດີຢູ່ໃນລະດັບປານກາງ, ແຕ່ເມື່ອພິຈາລະນາເປັນແຕ່ລະປັດໄຈຍ່ອຍແລ້ວຈະເຫັນໄດ້ວ່າ ແຕ່ລະຂໍ້ມີຄ່າສະເລ່ຍຢູ່ໃນລະດັບປານກາງຄືກັນໝົດ ໄດ້ແກ່ ປັດໄຈດ້ານເສດຖະກິດ, ປັດໄຈດ້ານສິ່ງແວດລ້ອມ, ປັດໄຈດ້ານສັງຄົມ ແລະ ປັດໄຈດ້ານລະບຽບ ແລະ ກົດໝາຍ ເຊິ່ງສອດຄ່ອງກັບ Manithong (2026) ໄດ້ສຶກສາສະພາບການປ່ຽນແປງສະຖາປັດຕະຍະກໍາອາຄານຢູ່ອາໄສໃນເຂດ UA ຂອງນະຄອນຫຼວງພະບາງ, ຜົນການສຶກສາພົບວ່າ ປະຊາຊົນມີຄວາມຄິດເຫັນວ່າ ປັດໄຈດ້ານສັງຄົມ, ເສດຖະກິດ, ການປ່ຽນແປງວິຖີຊີວິດ ແລະ ສະພາບແວດລ້ອມ ມີຜົນຕໍ່ການດັດແປງພາຍໃນເຮືອນຢູ່ອາໄສໃນລະດັບຫຼາຍ, ການປ່ຽນແປງທີ່ພົບເຫັນຫຼາຍ ໄດ້ແກ່ ການແບ່ງຫ້ອງໃໝ່, ການປັບປຸງຫ້ອງນໍ້າ, ການໃຊ້ວັດສະດຸທັນສະໄໝ ແລະ ການປັບພື້ນທີ່ໃຫ້ຮອງຮັບການທ່ອງທ່ຽວ.

ລະດັບຄວາມຄິດເຫັນຕໍ່ ການປ່ຽນແປງສະຖາປັດຕະຍະກໍາພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໂດຍລວມແມ່ນມີການປ່ຽນແປງຢູ່ໃນລະດັບຫຼາຍ, ໃນນັ້ນ ດ້ານທີ່ມີການປ່ຽນແປງຫຼາຍທີ່ສຸດ ໄດ້ແກ່ ພື້ນທີ່ໃຊ້ສອຍພາຍໃນ (ການປ່ຽນຜັງຫ້ອງໃໝ່ເກືອບທັງໝົດ ເພື່ອຮອງຮັບທຸລະກິດ ແລະ ສິ່ງອໍານວຍຄວາມສະດວກ, ສ່ວນການປ່ຽນແປງຢູ່ໃນລະດັບຫຼາຍ ໄດ້ແກ່ ຕໍ່ມາແມ່ນຊັ້ນລຸ່ມ/ໃຕ້ຖຸນ (ການອັດໃຕ້ຖຸນເຮືອນໄມ້ໃຫ້ເປັນຫ້ອງກໍ່ດິນຈີ່ ເພື່ອເພີ່ມພື້ນທີ່ໃຊ້ສອຍ), ໂຄງສ້າງຫຼັງຄາ (ການປ່ຽນວັດສະດຸມຸງຈາກດິນຂໍເປັນວັດສະດຸທົດແທນ ແຕ່ຮັກສາຮູບຊົງເດີມ), ປະຕູ ແລະ ປ່ອງຢ້ຽມ (ການປ່ຽນຮູບແບບມືຈັບ, ການໃສ່ແກ້ວ ແລະ ການຕິດຕັ້ງເຄື່ອງປັບອາກາດ), ສ່ວນດ້ານທີ່ມີການປ່ຽນແປງລະດັບປານກາງ ໄດ້ແກ່ ວັດສະດຸຝາ ແລະ ພື້ນ (ການປ່ຽນຈາກໄມ້ເປັນເບຕົງ ຫຼື ເພີ່ມການບຸຝາດ້ວຍວັດສະດຸສະໄໝໃໝ່) ແລະ ສຸດທ້າຍແມ່ນຮູບລັກສະນະພາຍນອກ (ມີການປ່ຽນແປງໜ້ອຍທີ່ສຸດ ເນື່ອງຈາກມີລະບຽບການຄຸ້ມຄອງທີ່ເຂັ້ມງວດ).

4.2 ປັດໄຈທີ່ມີຜົນຕໍ່ການປ່ຽນແປງສະຖາປັດຕະຍະກໍາພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA)

ຜົນການວິເຄາະການຖົດຖອຍພະຫຸຄູນ ປັດໄຈທີ່ມີຜົນຕໍ່ການປ່ຽນແປງສະຖາ ປັດຕະຍະກໍາພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ ພົບວ່າ ປັດໄຈດ້ານສັງຄົມ ແລະ ປັດໄຈດ້ານສິ່ງແວດລ້ອມ ແມ່ນມີຜົນຕໍ່ການປ່ຽນແປງສະຖາ ປັດຕະຍະກໍາພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ. ໃນນັ້ນ ປັດໄຈດ້ານສັງຄົມ ແມ່ນມີຜົນຕໍ່ການປ່ຽນແປງສະຖາ ປັດຕະຍະກໍາພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງຫຼາຍທີ່ສຸດ ແລະ ໜ້ອຍທີ່ສຸດແມ່ນ ປັດໄຈດ້ານສິ່ງແວດລ້ອມ. ສອດຄ່ອງກັບການຄົ້ນຄວ້າຂອງ Vongvilay et al. (2015) ໄດ້ຄົ້ນຄວ້າກ່ຽວກັບ ປັດໄຈທີ່ກໍ່ໃຫ້ເກີດການປ່ຽນແປງເຮືອນລາວດັ້ງເດີມ ໃນຫຼວງພະບາງ ໂດຍວິເຄາະເຮືອນຕົວຢ່າງ 5 ຫຼັງ ຜົນພົບວ່າ ການປ່ຽນແປງເຮືອນບໍ່ໄດ້ເກີດຈາກປັດໄຈດຽວ ແຕ່ເກີດຈາກຫຼາຍປັດໄຈ ເຊັ່ນ ໂລກາພິວັດ, ກົດລະບຽບອະນຸລັກ, ເສດຖະກິດ ແລະ ສັງຄົມ; ການປ່ຽນແປງຍັງສໍາພັນກັບການຫາລາຍຮັບ ແລະ ຄວາມຕ້ອງການທີ່ຢູ່ອາໄສ. ສອດຄ່ອງກັບ Leong et al. (2017) ສຶກສາຜົນຂອງການເຕີບໂຕການທ່ອງທ່ຽວຕໍ່ພູມສັນຖານກໍ່ສ້າງໃນເຂດມໍລະດົກຫຼວງພະບາງ ໂດຍໃຊ້ GIS ແລະ ສະຖິຕິ, ຜົນການຄົ້ນຄວ້າພົບ

ວ່າ ການປ່ຽນໃຊ້ອາຄານໄປເປັນກິດຈະການທ່ອງທ່ຽວ ເຊັ່ນ ເກສເຮົ້າ ແລະ ຮ້ານອາຫານ ສຳພັນກັບການປ່ຽນຮູບແບບສະຖາປັດຕະຍະກຳ, ວັດສະດຸຫຼັງຄາ ແລະ ວັດສະດຸອາຄານ ແລະ ສອດຄ່ອງກັບ Suntikul (2011) ສຶກສາຄວາມສຳພັນລະຫວ່າງນະໂຍບາຍມໍລະດົກ, ການທ່ອງທ່ຽວ ແລະ ທຸລະກິດໃນຫຼວງພະບາງ. ຜົນພົບວ່າ ຈຳນວນທຸລະກິດທ່ອງທ່ຽວເພີ່ມຈາກ 87 ແຫ່ງ ໃນປີ 1997 ເປັນ 363 ແຫ່ງ ໃນປີ 2009, ແລະ ທຸລະກິດຫຼາຍແຫ່ງຕັ້ງຢູ່ໃນອາຄານມໍລະດົກ, ນີ້ສະທ້ອນວ່າ ປັດໄຈເສດຖະກິດ ແລະ ການຫາລາຍຮັບ ມີຜົນໃຫ້ເຮືອນຢູ່ອາໄສຖືກດັດແປງເປັນພື້ນທີ່ຄ້າຂາຍ, ພັກແຮມ ຫຼື ບໍລິການ.

## 5. ສະຫຼຸບ

1) ລະດັບຄວາມຄິດເຫັນຕໍ່ປັດໄຈທີ່ມີຜົນຕໍ່ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ນະຄອນຫຼວງພະບາງ ພົບວ່າ ໂດຍລວມແມ່ນເຫັນດີຢູ່ໃນລະດັບປານກາງ, ແຕ່ເມື່ອພິຈາລະນາເປັນແຕ່ລະປັດໄຈຍ່ອຍແລ້ວຈະເຫັນໄດ້ວ່າ ແຕ່ລະຂໍ້ມີຄ່າສະເລ່ຍຢູ່ໃນລະດັບປານກາງຄືກັນໝົດ ໄດ້ແກ່ ປັດໄຈດ້ານເສດຖະກິດ, ປັດໄຈດ້ານສິ່ງແວດລ້ອມ, ປັດໄຈດ້ານສັງຄົມ ແລະ ປັດໄຈດ້ານລະບຽບ ແລະ ກົດໝາຍ.

2) ປັດໄຈທີ່ມີຜົນຕໍ່ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ນະຄອນຫຼວງພະບາງ ພົບວ່າ ມີປັດໄຈດ້ານສັງຄົມ ແລະ ປັດໄຈດ້ານສິ່ງແວດລ້ອມ, ເມື່ອພິຈະລະນາຕົວປ່ຽນອິດສະຫຼະ ທີ່ມີອຳນາດໃນການພະຍາກອນ ແລະ ສາມາດອະທິບາຍຄວາມປ່ຽນແປງບັນດາປັດໄຈການປ່ຽນແປງ ທີ່ມີຜົນຕໍ່ການປ່ຽນແປງສະຖາປັດຕະຍະກຳພາຍໃນເຮືອນຢູ່ອາໄສ ໃນເຂດອານຸລັກເມືອງເກົ່າ (UA) ໃນນະຄອນຫຼວງພະບາງ ໄດ້ເຖິງ 27.20%.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Cronbach, L. J. (1951). Coefficient alpha and the internal structure of tests. *Psychometrika, 16*(3), 297–334.

Creswell, J. W. (2014). *Research Design: Qualitative, Quantitative and Mixed Methods Approaches*. Sage.

DeVellis, R. F. (2016). *Scale development: Theory and applications* (4th ed.). Sage.

Etikan, I., Musa, S. A., & Alkassim, R. S. (2016). Comparison of Convenience Sampling and Purposive Sampling. *American Journal of Theoretical and Applied Statistics, 5*(1), 1–4.

Leong, C., Takada, J., Hanaoka, S., & Yamaguchi, S. (2017). Impact of tourism growth on the changing landscape of a World Heritage Site: Case of Luang Prabang, Lao PDR. *Sustainability, 9*(11), 1996.

Likert, R. (1932). A technique for the measurement of attitudes. *Archives of Psychology, 140*, 1–55.

Manithong, P. (2026). Study the state of architectural changes in residential buildings in the UA World Heritage Area in Luang Prabang City. *Souphanouvong University Journal Multidisciplinary Research and Development, 11*(Special), 226–234.

Phonesaly, N. (2018). *A Study on the Problems of Altering Lao Traditional Houses in ZPP-Ua Zone, Luang Prabang World Heritage Site, Lao PDR* [Master's thesis, Seoul National University]. Graduate School of Engineering, Architecture Major.

Rapoport, A. (1969). *House Form and Culture*. Englewood Cliffs, NJ: Prentice-Hall.

Suntikul, W. (2011). *Linkages between heritage policy, tourism and business enterprises in Luang Prabang*. ICOMOS Paris 2011.

Taplin, D., & Clark, H. (2002). *Theory of Change basics: A primer on theory of change*. Act Knowledge.

UNESCO. (2004). Luang Prabang: World Heritage City. UNESCO World Heritage Centre.

UNESCO. (2011). *Recommendation on the Historic Urban Landscape*. Paris: UNESCO.

Vongvilay, X., Kang, Y.K., & Choi, J.H. (2015). The impact factors causing transformation of Lao Traditional House: Case study of Luang Prabang, Lao PDR. *Journal of the Korean Housing Association, 26*(2), 1-12. https://doi.org/10.6107/JKHA.2015.26.2.001

Weiss, C. H. (1995). *Nothing as practical as good theory: Exploring theory-based evaluation for comprehensive community initiatives for children and families*.